ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------000-------

ກະຊວງສຶກສາທິການ ແລະ ກິລາ

ເລກທີ 0368 /ສສກ.15

ນະຄອນຫຼວງວຽງຈັນ, ວັນທີ 03 APR 2015

# ຄຳສັ່ງເພີ່ມເຕີມ

ເຖິງ : ທ່ານຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ / ນະຄອນຫຼວງ.

ເລື່ອງ : ກ່ຽວກັບການສ້າງແຜນ ແລະ ຈັດສົ່ງພະນັກງານ ແລະ ນັກຮຽນໄປຍົກລະດັບຕ່າງໆ ຢູ່ ສສ.ຫວຽດນາມ ດ້ວຍແຫຼ່ງທຶນຕ່າງໆ.

ເພື່ອເຮັດໃຫ້ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ສະບັບເລກທີ 08/ນຍ, ລົງວັນທີ 20 ກຸມພາ 2014 ແລະ ແຈ້ງການແນະນຳ ຂອງ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ, ສະບັບເລກທີ 210/ສສກ.14, ລົງວັນທີ 25 ກຸມພາ 2014 , ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ອອກຄຳສັ່ງເພີ່ມເຕີມ:

1. ສະພາບຜ່ານມາການຈັດຕັ້ງປະຕິບັດຄຳສັ່ງຕ່າງໆຍັງບໍ່ທັນເຂັ້ມງວດ ແລະ ເປັນເອກະພາບເຮັດໃຫ້ມີຜົນສະທ້ອນໃນທາງລົບຕໍ່ກັບແຜນການຮ່ວມມືລະຫວ່າງ ບັນດາແຂວງ-ນະຄອນຫຼວງ ຂອງ ສປປ ລາວ ກັບ ແຂວງຕ່າງໆຂອງ ສສ.ຫວຽດນາມ ໂດຍສະເພາະດ້ານການສຶກສາບໍ່ໄປຕາມຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ແລະ ແຈ້ງການແນະນຳຂອງທ່ານລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ;
2. ຕໍ່ກັບການປະຕິບັດໃນວຽກງານດັ່ງກ່າວໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງເຊື່ອມຊຶມບັນດານິຕິກຳໃຫ້ເລິກເຊິ່ງ ແລະ ປະຕິບັດຢ່າງເຂັ້ມງວດ ໂດຍສະເພາະແມ່ນບັນດານິຕິກຳດັ່ງນີ້:
   - 2.1 ຂໍ້ຕົກລົງຂອງຫົວໜ້າຄະນະຮັບຜິດຊອບ "ໂຄງການຍົກສູງຄຸນນະພາບ ແລະ ປະສິດທິຜົນ ການຮ່ວມມືລາວ-ຫວຽດນາມ ໃນຂົງເຂດການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ ໄລຍະ 2011-2020" ວ່າດ້ວຍການກຳນົດມາດຕະຖານ ແລະ ເງື່ອນໄຂ ໃນການຄັດເລືອກນັກສຶກສາໄປຮຽນ ສສ.ຫວຽດນາມ, ສະບັບເລກທີ 1374/ ສສກ, ລົງວັນທີ 04 ເມສາ 2013. ຢ່າງເຂັ້ມງວດ;
   - 2.2 ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດສົ່ງພະນັກງານ ແລະ ນັກຮຽນ ໄປຍົກລະດັບຕ່າງໆຢູ່ ສສ. ຫວຽດນາມ ດ້ວຍແຫຼ່ງທຶນຕ່າງໆ ສະບັບເລກທີ 08/ນຍ, ລົງວັນທີ 20 ກຸມພາ 2014;
   - 2.3 ແຈ້ງການແນະນຳຂອງທ່ານລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 210/ສສກ.14, ລົງວັນທີ 25 ກຸມພາ 2014 ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດສົ່ງພະນັກງານ ແລະ ນັກຮຽນ ໄປຍົກລະດັບຕ່າງໆຢູ່ ສສ.ຫວຽດນາມ ດ້ວຍແຫຼ່ງທຶນຕ່າງໆ ສະບັບເລກທີ 08/ນຍ, ລົງວັນທີ 20 ກຸມພາ 2014;

2.4 ອະນຸສັນຍາວ່າດ້ວຍການຮ່ວມມືດ້ານການກໍ່ສ້າງບຸກຄະລາກອນ ລະຫວ່າງ ລັດຖະບານ ສປປ.ລາວ ແລະ ລັດຖະບານ ສສ.ຫວຽດນາມ, ລົງວັນທີ 09 ກຸມພາ 2012;

2.5 ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍລະບຽບຄຸ້ມຄອງນັກຮຽນ ນັກສຶກສາລາວໄປສຶກສາຢູ່ຕ່າງປະເທດ, ສະບັບເລກທີ 3552/ສສກ.ກນ.13, ລົງວັນທີ 28 ສິງຫາ 2013;

3. ກ່ຽວກັບການປະຕິບັດສັນຍາຮ່ວມມືລະຫວ່າງແຂວງຂອງລາວ ກັບ ບັນດາແຂວງ ຫຼື ສະຖາບັນການສຶກສາຂອງຫວຽດນາມໃຫ້ປະຕິບັດດັ່ງນີ້:

3.1 ທຶນແຂວງແຮກສ່ຽວ ຫຼື ທຶນຊ່ວຍເຫຼືອ ລະຫວ່າງ ແຂວງຕໍ່ແຂວງ ຫຼື ທຶນຊ່ວຍເຫຼືອຂອງສະຖາບັນການສຶກສາຕ່າງໆ ຂອງ ສສ.ຫວຽດນາມ ຊຶ່ງບໍ່ແມ່ນການຕົກລົງ ຂອງ ສອງກະຊວງສຶກສາ ຂອງ ສປປ.ລາວ ແລະ ສສ.ຫວຽດນາມນັ້ນ ມອບໃຫ້ເປັນຄວາມຮັບຜິດຊອບຂອງແຂວງ ແລະ ສະຖາບັນການສຶກສາທີ່ໄດ້ຕົກລົງກັນ ທຶນດັ່ງກ່າວແມ່ນບໍ່ສາມາດເອົາເຂົ້າແຜນການຮ່ວມມືຂອງລັດຖະບານສອງຝ່າຍໄດ້;

3.2 ທຶນສ່ວນຕົວທີ່ໄປຮຽນໃນແຜນການຮ່ວມມືຂອງບັນດາແຂວງ ແລະ ຂອງສະຖາບັນການສຶກສາຕ່າງໆ ໃຫ້ປະຕິບັດຕາມຄຳສັ່ງ ແລະ ແຈ້ງການແນະນຳທີ່ໄດ້ກ່າວມາຂ້າງເທິງນັ້ນ, ຊຶ່ງມີແບບຟອມໄປຮຽນດ້ວຍທຶນສ່ວນຕົວ ຢູ່ ກົມກິດຈະການນັກສຶກສາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ພ້ອມກັນປະຕິບັດຢ່າງເຂັ້ມງວດ ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າຫາກມີບັນຫາດ້ານວິທີການ, ດ້ານລະບຽບການ ຫຼື ບັນຫາອື່ນໆ ໃຫ້ລາຍງານໄປຍັງກົມກ່ຽວຂ້ອງ ຂອງ ກະຊວງສຶກສາທິການ ແລະ ກິລາ ຊາບນຳເພື່ອຫາວິທີແກ້ໄຂໃຫ້ທັນເວລາ.

ດຊ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ຣສ.ດຣ.ກອງສີ ແສງມະນີ

ບ່ອນສົ່ງ :

- ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ແຂວງລະ 1 ສະບັບ
- ສະຖາບັນການສຶກສາ ສາຍອາຊີວະສຶກສາ
  ແລະມະຫາວິທະຍາໄລທັງພາກລັດ ແລະ ເອກະຊົນ ແຫ່ງລະ 1 ສະບັບ
- ກົມທີ່ກ່ຽວຂ້ອງ 1 ສະບັບ
- ຫ້ອງການຄະນະກຳມາທິການຮ່ວມມືລາວ-ຫວຽດນາມ 1 ສະບັບ ( ເພື່ອຊາບ ແລະ ຕິດຕາມ )